# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 11 ພຶສພາ 2008 (5-11-2008)

---

## ຕິດຕໍ່ພົວພັນ

**ຂໍ້ພຣະຄັມພີໃນບົດຮຽນ:** ພຣະບັນຍັດສອງ 6:4-9; ສອງຊາມູເອນ 14:23-24, 28-33; ສຸພາສິດ 4:3-6;

**ພຣະຄັມພີແຫ່ງຄວາມຈິງ:** ການຕັ້ງໃຈທີ່ຈະຕິດຕໍ່ພົວພັນກັບຄົນອື່ນກ່ຽວກັບພຣະເຈົ້າແລະທາງຂອງພຣະອົງ ຊ່ວຍສ້າງສາຍສຳພັນແລະຫລີກເວັ້ນການເຮັດຜິດຕໍ່ກັນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃນການສ້າງສາຍສຳພັນທີ່ຫມັ້ນຄົງຢ່າງແທ້ຈິງ ໂດຍ:

- ການໄຈ້ແຍກເຫດຜົນຕ່າງໆໃນສາຍສຳພັນຂອງຄົນທີ່ໄຄ່ຄວ້າຫລືຂາດໃນການຕິດຕໍ່ພົວພັນຊຶ່ງກັນແລະກັນແລະ
- ການຕັດສິນໃຈເລືອກເອົາສາຍສຳພັນອັນນຶ່ງທີ່ທ່ານຊອກຊ່ອງທາງໃນການຕິດຕໍ່ພົວພັນເລື້ອຍໆກ່ຽວກັບພຣະເຈົ້າແລະເສັ້ນທາງຕ່າງໆຂອງພຣະອົງ.

## ເປັນຫຍັງການ(ສື່ສານ)ຕິດຕໍ່ພົວພັນຈຶ່ງເປັນສິ່ງຈຳເປັນໃນການເຮັດໃຫ້ສາຍສຳພັນດີຂຶ້ນ?

ຟເຣດກຳລັງປ່ວຍຫນັກແລະຢູ່ໃນໂຮງຫມໍ. ແຕ່ວ່າເມື່ອຂ້າພະເຈົ້າໄປຢ້ຽມຢາມລາວ, ລາວບໍ່ໄດ້ກ່າວເຖິງຄວາມເຈັບເປັນຂອງລາວຫລາຍເທົ່າກັບເຣື່ອງສາຍສຳພັນທີ່ຈວນຈະຂາດສະບັ້ນລົງ. "ມື້ຄືນນີ້ລູກຊາຍຂອງຂ້ອຍກໍໄດ້ມາຢ້ຽມຂ້ອຍ." ລາວເວົ້າອີກວ່າ, "ມັນເປັນຄັ້ງທຳອິດທີ່ພວກເຮົາໄດ້ຕິດຕໍ່ພົວພັນກັນໃນປີນີ້." ຟເຣດຮູ້ສຶກເຈັບປວດຕໍ່ສາຍສຳພັນທີ່ຫັກພັງນັ້ນຫລາຍກວ່າຄວາມເຈັບປວດໃນຮ່າງກາຍຂອງລາວ.

ການຕິດຕໍ່ພົວພັນແມ່ນເປັນທັງເຄື່ອງຫມາຍບອກເຖິງອາການຂອງສາຍສຳພັນແລະເປັນແຫລ່ງທີ່ມາຂອງສິ່ງຕ່າງໆຕໍ່ທຸກໆສາຍສຳພັນຂອງພວກເຮົາ. ຂໍ້ພຣະຄັມພີຕ່າງໆທີ່ພວກເຮົາສຶກສາໃນມື້ນີ້ຈະທ້າທາຍພວກເຮົາໃຫ້ຕິດຕໍ່ພົວພັນ(ສື່ສານ)ໃນສິ່ງທີ່ມີສ່ວນພົວພັນກັບບັນດາຜູ້ທີ່ມີສ່ວນໃນຊີວິດຂອງພວກເຮົາ.

## ສຶກສາພຣະຄັມພີ

**1. ການຕິດຕໍ່ພົວພັນ-ຕົວຢ່າງຂອງເບື້ອງເທິງແລະການຍົກຍໍສັຣເສີນ** (ພບຍສ 6:4-9)

ເມື່ອຖືກຖາມໃຫ້ບອກຊື່ຂໍ້ບັນຍັດທີ່ສຳຄັນທີ່ສຸດທີ່ພຣະເຢຊູກ່າວຢໍ້າຈາກພຣະທັມພຣະບັນຍັດສອງ ນັກຮຽນພຣະຄັມພີສ່ວນຫລາຍເອີ້ນວ່າເຊມາ(ຊຶ່ງເປັນຄຳໃນພາສາເຮັບເຣີແປໄດ້ຄວາມຫມາຍວ່າໄດ້ຍິນ). ສິ່ງທີ່ສຳຄັນທີ່ສຸດທີ່ພຣະເຢຊູກ່າວແມ່ນຢາກໃຫ້ຮູ້ຈັກກັບພຣະເຈົ້າອົງທ່ຽງແທ້, ໃຫ້ຮັກພຣະອົງດ້ວຍສຸດຈິດສຸດໃຈ, ແລະໃຫ້ຄວາມຈິງຂອງພຣະອົງຕັ້ງຢູ່ໃນໃຈຂອງທ່ານ. ເມື່ອທ່ານຫາກມີປະສົບການກັບຄວາມຈິງຂອງພຣະເຈົ້າແລ້ວທ່ານຈະຊອກຫາທຸກວິທີທາງໃນການເວົ້າເຣື່ອງກ່ຽວກັບການຮັກພຣະເຈົ້າແລະການຢູ່ເພື່ອພຣະເຈົ້າຕໍ່ຄົນອື່ນໆ, ພິເສດແມ່ນພວກລູກເຕົ້າຂອງທ່ານ. ຂໍ້ພຣະຄັມພີທີ່ພຣະເຢຊູໄດ້ໃຊ້ແມ່ນມີຄວາມສຳຄັນຫລາຍ(ມທ. 22:37-38; ມຣກ. 12:39-40; ລກ. 10:27).

ເມື່ອຂ້າພະເຈົ້າພ້ອມກັບພັຣຍາ, ລົມດາໄດ້ນັ່ງກິນເຂົ້າແລງທີ່ບ້ານຂອງເພື່ອນ, ພວກເຮົາສັງເກດເຫັນກະຕ່ານ້ອຍທີ່ຕັ້ງຢູ່ໃຈກາງຂອງໂຕະທີ່ເຕັມໄປດ້ວຍກໍ້ຂໍ້ພຣະຄັມພີໃນເຈັ້ຽນ້ອຍໆ, ແຕ່ລະກໍ້ມັດດ້ວຍສາຍເຊືອກ. ກ່ອນທີ່ພວກ

ເຮົາຈະອະທິຖານຂອບຄຸນພຣະເຈົ້າສຳລັບຄາບເຊົ້າ ລູກຂອງລາວກໍຈັບເອົາກໍ້ພຣະຄັມພີມາອ່ານໃຫ້ພວກເຮົາຟັງ. ຂໍ້ພຣະຄັມພີແຕ່ລະກໍ້ແມ່ນພຣະທັມທີ່ພໍ່ແມ່ຂອງພວກເຂົາຕ້ອງການໃຫ້ພວກລູກໆຮູ້ຢ່າງຂຶ້ນໃຈ ກ່ອນທີ່ພວກເຂົາຈະໃຫຍ່ຂຶ້ນແລະອອກຈາກບ້ານໄປ. ພວກເຂົາພົບວິທີການທີ່ດີໃນການອ່ານພຣະທັມແລະສົນທະນາກັນກ່ຽວເຣື່ອງຄວາມຈິງຂອງພຣະເຈົ້າໃນທຸກໆຄາບເຊົ້າ. ທ່ານສາມາດເຮັດກະຕ່າໃສ່ກໍ້ຂໍ້ພຣະຄັມພີເອງຫລືຄິດຄົ້ນຫາທາງໃໝ່ໃນການເຊື່ອຟັງພຣະບັນຊາຂອງພຣະເຈົ້າໃຫ້ສົນທະນາກັນເຖິງຄວາມຈິງຝ່າຍຈິດວິນຍານກັບພວກລູກໆຂອງທ່ານ.

ຂໍ້ 8 ແລະ 9 ຄຳສັ່ງຄືນຂອງພຣະເຈົ້າໃຫ້ຮັກສາຄວາມຈິງຂອງພຣະເຈົ້າໂດຍຕິດໄວ້ທີ່ມືແລະໜ້າຜາກແລະຢູ່ເທິງຂອບປະຕູເຮືອນແລະປະຕູຮົ້ວທາງເຂົ້າບ້ານຂອງທ່ານ. ບັນຍັດນີ້ສາມາດເອົາໃຊ້ໄດ້ທັງຝ່າຍຈິດວິນຍານແລະຝ່າຍຮ່າງກາຍ. ຖ້າເອົາໃຊ້ທາງຝ່າຍວິນຍານ, ພຣະຄຳເຫລົ່ານີ້ຄຳສັ່ງໃຫ້ພວກທີ່ເຊື່ອໃຫ້ພຣະທັມແຫ່ງຄວາມຈິງຂອງພຣະເຈົ້ານຳພາທຸກໆສິ່ງທີ່ມືຈະເຮັດແລະຄວາມຄິດຂອງພວກເຮົາ. ພວກເຮົາຕ້ອງດຳຣົງຊີວິດຕາມພຣະຄຳຂອງພຣະອົງເມື່ອພວກເຮົາຜ່ານເຂົ້າປະຕູເຮືອນແລະເມື່ອພວກເຮົາຜ່ານອອກໄປສູ່ໂລກພາຍນອກ. ຖ້າເອົາໃຊ້ແບບຕົງໆ, ພຣະຄຳເຫລົ່ານີ້ທ້າທາຍພວກເຮົາ ໃຫ້ຊອກຫາທາງທີ່ຈະສະແດງຄວາມຈິງຂອງພຣະເຈົ້າເພື່ອພວກເຮົາຈະໄດ້ຈື່ຈຳພຣະຄຳຂອງພຣະອົງແລະແບ່ງປັນໃຫ້ແກ່ຄົນອື່ນ.

ສະມາຊິກໃນໂບດແລະເພື່ອນໆໃນຄຸ້ມກໍພາກັນມາເຮັດຕຸກກະຕາກ່ວາ800 ອັນເພື່ອຊ່ວຍທີມປະກາດຂ່າວປະເສີດໃນປະເທດແທນຊາເນັຽ. ຕຸກກະຕາແຕ່ລະອັນມີສາຍຄໍທີ່ເຮັດດ້ວຍໝາກຕຸ້ມຫລາຍໆສີທີ່ບອກເຖິງຂ່າວປະເສີດ. ພວກເດັກນ້ອຍໄດ້ຮັບເຄື່ອງຫລິ້ນທີ່ສວຍງາມພ້ອມທັງຂ່າວປະເສີດທີ່ຊົງຣິດເພາະວ່າທີມງານຂອງພວກເຮົາພົບວິທີທີ່ສະແດງແລະແບ່ງປັນຄວາມຈິງຂອງພຣະເຈົ້າ. ຄົ້ນຄວ້າຊອກຫາທາງຂອງທ່ານເອງເພື່ອສົນທະນາເຣື່ອງຄວາມຈິງຂອງພຣະອົງຕໍ່ຄົນອື່ນ. ນຸ່ງເສື້ອຍືດທີ່ມີຄຳຂວັນຂອງຄຣິສຕຽນ. ຫ້ອຍຮູບພາບຊຶ່ງພົບໃນພຣະຄັມພີໄວ້ໃນຫ້ອງການ. ເອົາວາຣະສານຫລືປື້ມຄຣິສຕຽນວາງໄວ້ໂຕະກາເຟ. ຕິດຂໍ້ພຣະຄຳທີ່ທ່ານມັກໃສ່ຕາມຕູ້ເຢັນ. ຊອກຫາທາງຂອງທ່ານເອງເພື່ອສະແດງແລະແບ່ງປັນຄວາມຈິງຂອງພຣະເຈົ້າ.

## ๒. <u>ຕິດຕໍ່ພົວພັນ -ຊີວິດແລະການຄຸ້ມຄອງຮັກສາ</u> (ສຸພາສິດ 4:3-6)

ຫລາຍປີຜ່ານມາແລ້ວ ຂ້າພະເຈົ້າກຳລັງເບິ່ງໂທຣະທັດຢູ່ເມື່ອໂຄສະນາຂ່າວອັນນຶ່ງສ້າງຄວາມສົນໃຈແກ່ຂ້າພະເຈົ້າ. ໂດຍທີ່ບໍ່ຮູ້ວ່າສິນຄ້າອັນໃດທີ່ເຂົາໂຄສະນາ, ຂ້າພະເຈົ້າເວົ້າກັບພໍ່ວ່າ "ພວກເຮົາຄວນມີຂອງອັນນັ້ນ" ພໍ່ກໍຢຸດໃນສິ່ງທີ່ລາວກຳລັງເຮັດຢູ່ນັ້ນ, ຂນະທີ່ເຫັນຕອນທ້າຍຂອງການໂຄສະນາກໍຮູ້ໂລດວ່າແມ່ນສິນຄ້າອັນໃດ. ລາວມານັ່ງທາງຂ້າງຂ້າພະເຈົ້າແລະອະທິບາຍວ່າເບິ່ງໃນຂ່າວໂຄສະນາຄືວ່າມັນສນຸກດີ. ຂ່າວໂຄສະນາຢາກຊັກນຳພວກເຮົາໃຫ້ຊື້ເບັຽ. ຈາກປະສົບການສ່ວນຕົວກັບພໍ່ຂອງລາວ(ປູ່). ພໍ່ຂ້າພະເຈົ້າອະທິບາຍວ່າເຫລົ້າມັນທຳລາຍຊີວິດແລະລາວເວົ້າເພີ້ມອີກວ່າ.ບໍ່ວ່າໂຄສະນາຈະຍົວະເຍົ້າແນວໃດກໍຕາມ, ເຮົາຈະບໍ່ນຳມັນເຂົ້າມາໃນເຮືອນຂອງພວກເຮົາເດັດຂາດ. ພໍ່ຂ້າພະເຈົ້າໃຊ້ເວລາໜ້ອຍນຶ່ງທີ່ຈະສົນທະນາເຖິງສະຕິປັນຍາທີ່ເຄີຍໄດ້ຮັບຜ່ານປະສົບການຊີວິດ -ຄືສະຕິປັນຍາທີ່ລາວເຊື່ອວ່າຈະສາມາດຊ່ວຍຊີວິດຈາກການຍົວະເຍົ້າທີ່ເປັນພັຍຕໍ່ຊີວິດ.

ໃນພຣະທັມສຸພາສິດກໍບັນລະຍາຍກ່ຽວກັບປະສົບການຢ່າງນີ້ເຊັ່ນກັນ. ຜູ້ເປັນພໍ່ກໍຈົດຈຳເຣື່ອງທີ່ພໍ່ແມ່ຂອງລາວໄດ້ຮັກລາວແລະມອບຄຳສອນແຫ່ງ**ສະຕິປັນຍາແລະຄວາມເຂົ້າໃຈ**ນັ້ນຕໍ່ໃຫ້ລາວ. ພໍ່ຜູ້ນີ້ກໍຢາກເຮັດແນວນັ້ນເຊັ່ນກັນເພື່ອລູກຊາຍຂອງຕົນ. ລາວຮູ້ວ່າພັຍອັນຕະລາຍມີຫລາຍຊ່ຳໃດ. ລາວຊັກຊວນໃຫ້ລູກຊາຍຂອງລາວ**ໃສ່ໃຈ**ຕໍ່ການສິດສອນນັ້ນ. ລາວຕ້ອງການທີ່ຈະໃຫ້ລູກຊາຍຂອງລາວປະຕິບັດຕາມສະຕິປັນຍາຢ່າງເຄັ່ງຄັດເພື່ອເປັນກຸນແຈນຳໄປສູ່ຊີວິດທີ່ມີສັນຕິສຸກຢ່າງລົ້ນເຫລືອ. ລາວວອນຂໍໃຫ້ລູກຊາຍຂອງລາວ**ຮັກສາຄຳບັນຊານັ້ນແລະມີຊີວິດຢູ່**.

ພະຍຸໃນຣະດູໜາວເຮັດໃຫ້ບ້ານຂ້າພະເຈົ້າຂາດໄຟຟ້າ. ຄອບຄົວຂອງຂ້າພະເຈົ້າກໍເຕົ້າໂຮມກັນອ້ອມເຕົາໄຟໃນຫ້ອງຮັບແຂກ, ເພາະມີແຕ່ທາງດຽວເທົ່ານັ້ນທີ່ຈະໄດ້ຄວາມອົບອຸ່ນ. ພວກເຮົາບໍ່ມີອິນເທີເນັດຕັ້ງຫລາຍຊົ່ວໂມງ, ບໍ່ໄດ້ເບິ່ງໂທຣະທັດ, ບໍ່ມີອັນໃດຖ່ວງດຶງ. ຂ້າພະເຈົ້າຈົດຈຳມື້ນັ້ນວ່າມັນບໍ່ແມ່ນມື້ທີ່ຂາດຄວາມສະດວກ, ແຕ່ວ່າການໂອ້ລົມກັນທີ່ພວກເຮົາໄດ້ເວົ້າກ່ຽວກັບຊີວິດ, ຄອບຄົວ, ແລະຄວາມເຊື່ອຂອງພວກເຮົາ.

ຫລາຍໆຄອບຄົວບໍ່ມີເວລາໂອ້ລົມກັນຫລາຍ. ເຖິງແມ່ນວ່າພວກເຮົາເວົ້າກັນ, ສ່ວນຫລາຍຂອງການສົນທະນາກໍແມ່ນກ່ຽວກັບການມີແຜນການແບບບ້າງບໍ່ງ ຫລືການຕັດສິນໃຈວ່າຮ້ານອາຫານໃດທີ່ພວກເຮົາຈະໄປກິນເຂົ້າ. ຄວາມຮັກເປັນວຽກທີ່ຍາກຫລາຍ. ພວກເຮົາຕ້ອງໄດ້ຕັ້ງໃຈຕັດການຖ່ວງດຶງຕ່າງໆອອກແລະເວົ້າກັບຄົນທີ່ພວກເຮົາຮັກກ່ຽວກັບສິ່ງທີ່ພວກເຮົາເຊື່ອນັ້ນແມ່ນສຳຄັນແທ້ໆ.

ທ່ານຈະເລີ້ມຕົ້ນໄດ້ຢ່າງໃດ? ແບ່ງປັນຄຳພຍານຂອງທ່ານ. ລົມເລື່ອງບົດຮຽນໂຮງຮຽນວັນອາທິດຕອນໄປໂບດ. ເວົ້າຄຸຍກັນເຖິງເລື່ອງຄຳເທສນາຂອງສິດຍາພິບານໃນຄາບເຂົ້າທ່ຽງວັນອາທິດ. ຫລັງຈາກເບິ່ງລາຍງານຂ່າວໃນໂທຣະທັດ, ມອດມັນໄວ້ແລ້ວຖາມຄຳຖາມ, "ແມ່ນຫຍັງທີ່ຄວາມເຊື່ອຂອງພວກເຮົາໄດ້ສອນເຮົາກ່ຽວກັບບັນຫານີ້?" ຖາມ: ຖ້າວ່ານັກຂ່າວຫາກຖາມທ່ານເຖິງຄວາມຄິດເຫັນກ່ຽວກັບເຫດການນັ້ນ, ທ່ານຈະຕອບວ່າຢ່າງໃດ? ຊອກຫາທາງຂອງທ່ານເອງເວົ້າກ່ຽວກັບສິ່ງທີ່ມີສາລະແລະສິ່ງຕໍ່ສະຕິປັນຍາຂອງພຣະເຈົ້າໃຫ້ແກ່ຄົນລຸ້ນຕໍ່ໄປ.

**3. ຕິດຕໍ່ພົວພັນ-ຄະດີການສຶກສາ** (2 ຊາມູເອນ 14:23-24, 28-33)

ສາຍສຳພັນຂອງອັບຊາໂລມກັບພໍ່ຂອງລາວ, **ດາວິດ**, ໄດ້ຂາດສະບັ້ນລົງ. ບັນຫານັ້ນໄດ້ເລີ້ມຢູ່ທີ່ຕອນ**ອັບຊາໂລມ**ໄດ້ຍິນວ່ານ້ອງສາວຂອງລາວ, ຕາມາ, ຖືກຂົ່ມຂືນ. ແທນທີ່ຈະຊອກຫາທາງປຶກສາກັບດາວິດ, ອັບຊາໂລມແກ້ໄຂບັນຫາດ້ວຍຕົວລາວເອງ. ລາວລໍ້ຜູ້ທີ່ຂົ່ມຂືນໃຫ້ອອກມາຈາກເຢຣູຊາເລັມແລະຂ້າຖິ້ມເສັຽ. ເມື່ອຢ້ານຕໍ່ການໂຕ້ຕອບຂອງດາວິດ, ອັບຊາໂລມຈຶ່ງໜີອອກຈາກພະຣາຊະວັງໄປລີ້ພັຍທີ່ເມືອງ**ເກຊູ**. ລາວອາສັຍຢູ່ທີ່ນັ້ນຈົນກ່ວາໂຢອາບ, ເພື່ອນຂອງດາວິດແລະເປັນທີ່ປຶກສາ, ໃຫ້ແມ່ໝ້າຍຊາວເຕໂກອາໄປຂໍຮ້ອງເລື່ອງຄະດີລູກຊາຍຂອງລາວຜູ້ນຶ່ງຕໍ່ກະສັດດາວິດທີ່ໄດ້ຂ້າອ້າຍນ້ອງຂອງຕົນຍ້ອນຜິດຖຽງກັນ. ເມື່ອກະສັດດາວິດຕັດສິນຄະດີລູກຊາຍຜູ້ທີ່ເຮັດຜິດຂອງຍິງໝ້າຍນັ້ນໃຫ້ພົ້ນໂທດ, ຍິງໝ້າຍຈຶ່ງຂໍຮ້ອງໃຫ້ກະສັດດາວິດຕັດສິນຄວາມໃນຄອບຄົວຂອງກະສັດເອງທີ່ມີຄະດີຄືກັນກັບຄະດີຂອງລູກຊາຍຍິງໝ້າຍແລະໃຫ້ຍົກໂທດຕໍ່ລູກຜູ້ທີ່ກະທຳຜິດຂອງກະສັດເອງ. ດາວິດໄດ້ຕົກລົງຍອມໃຫ້ອັບຊາໂລມກັບຄືນມາຢູ່ກຸງ**ເຢຣູຊາເລັມ**, ແຕ່ວ່າບໍ່ໃຫ້ເຂົ້າມາໃນບ່ອນທີ່ດາວິດຢູ່.

ຫລັງຈາກຢູ່ຕ່າງບ່ອນເປັນເວລາສອງປີໃນເມືອງດຽວກັນ, ໂຢອາບຖາມດາວິດໃຫ້ພົບກັບອັບຊາໂລມໜ້າຕໍ່ໜ້າ. ຫລັງຈາກຫ້າປີຜ່ານໄປ, ພໍ່ແລະລູກຊາຍກໍໄດ້ພົບກັນອີກ, ແຕ່ວ່າສາຍສຳພັນຍັງບໍ່ດີເປັນປົກກະຕິເທື່ອ. ໃນເວລາທີ່ຢູ່ຫ່າງໄກກັນ, ຄວາມບໍ່ເຕັມໃຈທີ່ຈະຍອມໃຫ້ຄວາມເຈັບປວດຂອງພວກເຂົາແລະແບ່ງປັນຊີວິດຂອງພວກເຂົາໃຫ້ຊຶ່ງກັນແລະກັນ, ມັນກໍເປັນບັນຫາໃຫ້ແກ່ທັງສອງຝ່າຍ.

ຫລັງຈາກນັ້ນອັບຊາໂລມກໍວາງແຜນໂຄ່ນລົ້ມຍຶດເອົາຣາຊອານາຈັກຂອງຜູ້ເປັນພໍ່ແລະເສັຍຊີວິດຂອງຕົນເປັນຄ່າຕອບແທນ. ດາວິດກໍໂສກເສົ້າທີ່ສຸດໃນການສູນເສັຽລູກຊາຍ. ຂ່າວບໍ່ດີໃນທີ່ນີ້ຄືດາວິດແລະອັບຊາໂລມຂາດໃນການຕິດຕໍ່ພົວກັນ, ການທະນາໂອ້ລົມກັນ. ຂ່າວດີນັ້ນກໍຄືພວກເຮົາສາມາດຖອດຖອນບົດຮຽນຈາກຄວາມຜິດພາດຂອງພວກເຂົາ ແລະບໍ່ເຮັດຊໍ້າຕາມພວກເຂົາ.

ພວກເຮົາໄດ້ຮຽນຫຍັງແດ່ຈາກຄວາມຜິດພາດຂອງພວກເຂົາ? ການສົນທະນາຢ່າງສັດຊື່ຊ່ວຍພວກເຮົາໃຫ້ຫລີກເວັ້ນຈາກການປະພຶດທີ່ນຳໄປສູ່ຄວາມຈິບຫາຍ. ເມື່ອອັບຊາໂລມໄດ້ຍິນຂ່າວວ່ານ້ອງສາວຂອງລາວ, ຕາມາ, ຖືກຂົ່ມຂືນສຳເລົາ, ລາວບໍ່ໄດ້ຕິດຕໍ່ພົວພັນຊອກຫາທາງປຶກສາກັບພໍ່ຂອງລາວກ່ອນທີ່ຈະລົງມືໂຕ້ຕອບຕາມແຜນຂອງລາວເອງ. ການກະທຳດ້ວຍຕົວລາວເອງ, ລາວຫລອກພໍ່ແລະອ້າຍນ້ອງຂອງລາວເພື່ອດັກຈັບຜູ້ທີ່ຂົ່ມຂືນແລະຂ້າລາວຖິ້ມ. ໃນຊ່ວງເວລາທີ່ເຕັມໄປດ້ວຍຄວາມເຈັບປວດອັນໃຫຍ່ຫລວງ, ເມື່ອພວກເຮົາຖືກທົດລອງໃຫ້ແກ້ແຄ້ນຕໍ່ຜູ້ທີ່ເຮັດໃຫ້ພວກເຮົາເຈັບປວດນັ້ນ, ພວກເຮົາຕ້ອງແບ່ງປັນຄວາມເຈັບປວດແລະແຜນການຕ່າງໆກັບຄົນທີ່ພວກເຮົາຮັກແລະໄວ້ວາງໃຈ. ມີແຕ່ທາງດຽວນີ້ເທົ່ານັ້ນທີ່ເຮົາສາມາດເລືອກທາງແຫ່ງຄວາມຮັກແລະຖືກຕ້ອງໃນການໂຕ້ຕອບຄືນ.

ການຕິດຕໍ່ພົວພັນແມ່ນຈຳເປັນແລະຮີບດ່ວນເມື່ອພວກເຮົາຫາກເຮັດໃຫ້ເກີດຄວາມເຈັບປວດຕໍ່ຊຶ່ງກັນແລະ ກັນ. ເມື່ອອັບຊາໂລມຂ້າອຳໂນນ, ລາວປົບໜີຈາກພໍ່ຂອງລາວແລະໂອກາດທີ່ຈະເຮັດໃຫ້ບາດແຜແຫ່ງສາຍສຳພັນຂອງ

ພວກເຂົານັ້ນໃຫ້ດີຂຶ້ນ. ເມື່ອພວກເຮົາເຮັດໃຫ້ຄົນອື່ນເຈັບ, ເປັນພິເສດແມ່ນຜູ້ທີ່ເຮົາຮັກ, ພວກເຮົາຕ້ອງຟ້າວໄປຫາເຂົາ ແລະອະທິບາຍການກະທຳຂອງພວກເຮົາ, ສະແດງອອກເຖິງຄວາມກິນແໜງ, ແລະຢາກສ້າງສາຍສຳພັນນັ້ນຄືນອີກ.

ສາຍສຳພັນທີ່ຂາດສະບັ້ນລົງແລ້ວຈະບໍ່ກໍ່ຕັ້ງຂຶ້ນມາໃໝ່ໄດ້ຈົນກ່ວາການສົນທະນາຈະຖືກເລີ້ມຕັ້ງໃໝ່. ດາວິດໄດ້ອະນຸຍາດໃຫ້ອັບຊາໂລມກັບມາກຸງເຢຣູຊາເລັມ, ແຕ່ວ່າບໍ່ໄດ້ເຫັນໜ້າລາວ. ການໂຕ້ຕອບທີ່ບໍ່ເຕັມໃຈບໍ່ໄດ້ປົວແປງສາຍສຳພັນຂອງພວກເຂົາເລີຍ. ຄົນສອງຄົນສາມາດນັ່ງຢູ່ໃນຫ້ອງດຽວກັນໄດ້, ນອນຕຽງດຽວນຳກັນໄດ້,ນັ່ງນະມັສການໃນມ້ານັ່ງແຖວດຽວກັນໄດ້ແລະບໍ່ຄືນດີກັນ. ຈົນກ່ວາພວກເຮົາເປີດຫົວໃຈຂອງພວກເຮົາ, ພວກເຮົາບໍ່ໄດ້ເຮັດໃນສິ່ງທີ່ຈຳເປັນສຳລັບການປົວແປງ.

## ບົດຮຽນຊີວິດ

ການຕິດຕໍ່ພົວພັນໃນສາຍສຳພັນທີ່ເປັນພຣະພອນຕໍ່ຄົນອື່ນໆແລະຖວາຍກຽດຕໍ່ພຣະເຈົ້າມີຄວາມສຳຄັນຢ່າງໃດ? ການຕິດຕໍ່ພົວພັນແມ່ນສຳຄັນຫລາຍທີ່ມັນຢືນຄຽງຂ້າງໃນການຮູ້ຈັກແລະໃນການຮັກພຣະເຈົ້າອົງທ່ຽງແທ້ແຕ່ພຽງອົງດຽວແລະການທີ່ມີປະສົບການກັບຄວາມຈິງຂອງພຣະອົງສຳລັບພວກເຮົາເອງ. ການຕິດຕໍ່ພົວພັນແມ່ນທາງທີ່ພຣະເຈົ້າສະຖາປະນາຂຶ້ນເພື່ອໃຫ້ຄົນອີກລຸ້ນນຶ່ງໄດ້ສິ່ງຕໍ່ສະຕິປັນຍາທີ່ສາມາດຊ່ວຍພວກຄົນທີ່ເກີດຕາມພວກເຮົາມານັ້ນໃຫ້ສ້າງພື້ນຖານໃນສິ່ງທີ່ພຣະເຈົ້າໄດ້ສິດສອນພວກເຮົາມາແລ້ວແລະໃຫ້ຫລີກເວັ້ນຄວາມຜິດພາດໃນອະດີດຜ່ານມາ. ໃນອາທິດນີ້ມີສາມຢ່າງທີ່ທ່ານຕ້ອງປ່ຽນແປງຄືອັນໃດແດ່ເພື່ອໃຫ້ການຕິດຕໍ່ພົວພັນແລະໃຫ້ສາຍສຳພັນຂອງທ່ານເປັນພຣະພອນຕໍ່ຄົນອື່ນໆແລະຖວາຍກຽດຕໍ່ພຣະເຈົ້າ?

1.________________________________________________

2.________________________________________________

3.________________________________________________

ຖ້າຫາກທ່ານບໍ່ມີລູກເຕົ້າ, ຫລານ, ເຫລັນ, ຢູ່ບ້ານນຳ, ແມ່ນຫຍັງຄືໂອກາດໃໝ່ທີ່ທ່ານມີເພື່ອພຣະເຈົ້າຈະສາມາດໃຊ້ຊ່ວຍຄົນອື່ນໃນການຕິດຕໍ່ພົວພັນ(ສື່ສານ)ພຣະຄຳແຫ່ງຊີວິດແລະຄວາມຮັກຂອງພຣະອົງ?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by PA.